ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 03181 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 24 ເມສາ 2019

# ແຈ້ງການ

ເຖິງ: ກອງຄຸ້ມຄອງພາສີ I-VII ແລະ ດ່ານພາສີຊາຍແດນໃນທົ່ວປະເທດ.

ເລື່ອງ: ການຈັດຕັ້ງປະຕິບັດຂັ້ນຕອນການສົ່ງອອກສິນຄ້າປະເພດແຮ່ທາດ, ເຄື່ອງປ່າຂອງດົງ ແລະ ອື່ນໆ ໄປຕ່າງປະເທດ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 08/ນຍ, ລົງວັນທີ 02 ກໍລະກົດ 2018 ວ່າດ້ວຍການເພີ່ມທະວີການຄຸ້ມຄອງກິດຈະການແຮ່ທາດໃນ ສປປລາວ;
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ວ່າດ້ວຍການປັບ ປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ;
- ອີງຕາມ ແຈ້ງການແນະນຳຂອງກົມພາສີ ສະບັບເລກທີ 01624/ກພສ, ລົງວັນທີ 04 ມີນາ 2019 ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 48/ລບ, ລົງວັນທີ 19 ກຸມພາ 2019.

ໃນໄລຍະຜ່ານມາ ກົມພາສີໄດ້ອອກແຈ້ງການ ສະບັບເລກທີ 01616/ກພສ, ລົງວັນທີ 04 ເມສາ 2018 ໃນການຄຸ້ມຄອງການສົ່ງອອກແຮ່ທາດ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດການຄຸ້ມຄອງການສົ່ງອອກສິນຄ້າປະເພດແຮ່ທາດ, ເຄື່ອງປ່າຂອງດົງ ແລະ ອື່ນໆ ໃຫ້ມີຄວາມສະດວກ, ກະທັດຮັດ, ຖືກຕ້ອງ, ຄ່ອງຕົວ ແລະ ເປັນເອກະພາບໃນທົ່ວປະເທດ.

**ກົມພາສີ ອອກແຈ້ງການ ດັ່ງນີ້:**

1. ການຈັດເກັບຄ່າພາສີຂາອອກ ໃຫ້ຈັດຕັ້ງປະຕິບັດຕາມລັດຖະບັນຍັດປະທານປະເທດ ສະບັບເລກທີ 02/ປປທ, ລົງວັນທີ 27 ເມສາ 2012 ວ່າດ້ວຍລາຍການສິນຄ້າ ແລະ ອັດຕາພາສີຂາອອກ;
2. ສຳລັບສິນຄ້າ, ເຄື່ອງຂອງ ທີ່ຖືກເສຍຄ່າຊົດພິເສດ (ພາສີຂາອອກ) ຕາມມາດຕາ 15 ແລະ 16 ຂອງມະຕິຕົກລົງຂອງສະພາລັດຖະມົນຕີ ສະບັບເລກທີ 47/ປສລ, ລົງວັນທີ 26 ມິຖຸນາ 1989 ໃຫ້ປະຕິບັດຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 48/ລບ, ລົງວັນທີ 19 ກຸມພາ 2019 ແມ່ນບໍ່ໃຫ້ເສຍຄ່າຊົດພິເສດ (ພາສີຂາອອກ);
3. ການສົ່ງອອກສິນຄ້າປະເພດແຮ່ທາດ, ເຄື່ອງປ່າຂອງດົງ ແລະ ອື່ນໆ ທີ່ໄດ້ເສຍຄ່າຊັບພະຍາກອນທຳມະຊາດແລ້ວ ແລະ ມີໜັງສືອະນຸຍາດສົ່ງອອກຈາກຂະແໜງການກ່ຽວຂ້ອງ ແມ່ນໃຫ້ປະກອບເອກະສານການແຈ້ງພາສີເປັນລາຍລະອຽດຢູ່ດ່ານພາສີບ່ອນສົ່ງອອກ ໂດຍບໍ່ຈຳເປັນມາຂໍອະນຸຍາດນຳກົມພາສີອີກ, ໃຫ້ປະຕິບັດຂັ້ນຕອນການແຈ້ງຕາມບົດແນະນຳຂອງກົມພາສີກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ ສະບັບເລກທີ 0097/ກພສ, ລົງວັນທີ 06 ມັງກອນ 2017;

4. ມອບໃຫ້ກອງຄຸ້ມຄອງພາສີ, ນຳພາ-ຊີ້ນຳບັນດາດ່ານພາສີຊາຍແດນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໃນການກວດກາການສົ່ງອອກໃຫ້ມີຄວາມຮັດກຸມ ທາງດ້ານຊະນິດ, ຈຳນວນ, ມູນຄ່າ, ນ້ຳໜັກ ພ້ອມທັງອຳນວຍຄວາມສະດວກ ແລະ ນຳໃຊ້ເຄື່ອງມືກວດກາດ້ວຍລະບົບສາຍແສງ, ຊິງຊັ່ງນ້ຳໜັກ ແລະ ອື່ນໆ ພ້ອມທັງສະຫຼູບສັງລວມສະຖິຕິການສົ່ງອອກທຸກໆ 03 ເດືອນ ໃຫ້ກົມພາສີ (ພະແນກນິຕິກຳ) ເພື່ອຕິດຕາມກວດກາ;
5. ມອບໃຫ້ກອງຄຸ້ມຄອງພາສີ ແລະ ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ ພ້ອມກັນຈັດຕັ້ງປະຕິບັດແຈ້ງການແນະນຳສະບັບນີ້ຢ່າງເຂັ້ມງວດ;
6. ໃນການຈັດຕັ້ງປະຕິບັດ ຖ້າພົບຄວາມຫຍຸ້ງຍາກໃຫ້ສັງລວມລາຍງານກົມພາສີ ເພື່ອມີວິທີການແກ້ໄຂຕາມກົດໝາຍ ແລະ ລະບຽບການ;
7. ແຈ້ງການສະບັບນີ້ ມີຜົນສັກສິດນຳໃຊ້ ແລະ ປ່ຽນແທນແຈ້ງການຂອງກົມພາສີ ສະບັບເລກທີ 01616/ກພສ, ລົງວັນທີ 04 ເມສາ 2018.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ.

**ຮັກສາການຫົວໜ້າກົມພາສີ**

ກະຊວງ ການເງິນ
ກົມພາສີ

ວົງຄຳແພງ ວົງທະຈັກ

ບ່ອນສົ່ງ:

- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ — 01 ສະບັບ (ເພື່ອຊາບ)
- ພະແນກອ້ອມຂ້າງກົມພາສີ, ພະແນກລະ — 01 ສະບັບ (ເພື່ອຕິດຕາມກວດກາ)
- ກອງຄຸ້ມຄອງພາສີ I-VII, ກອງລະ — 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ , ດ່ານລະ — 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ສຳເນົາ — 01 ສະບັບ